ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

ເລກທີ 28/ຫ.ກ

ທີ່, ນະຄອນຫລວງວຽງຈັນ, ວັນທີ 26 ມິຖຸນາ 2018

## ແຈ້ງການ

ຮຽນ : ຄະນະພັກ-ຄະນະນໍາ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າຝຶກອົບຮົມໄອຍະການ, ອົງການໄອຍະການປະຊາຊົນ ພາກໃຕ້, ພາກກາງ ແລະ ພາກເໜືອ, ອົງການໄອຍະການປະຊາຊົນ ແຂວງ-ນະຄອນ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການເປີດນໍາໃຊ້ເວບໄຊທາງການຂອງຄະນະຈັດຕັ້ງສູນກາງພັກ ຜ່ານອິນເຕີເນັດ.

- ອີງຕາມ ຂໍ້ຕົກລົງສະບັບເລກທີ 020/ອອປສ; ລົງວັນທີ 11/06/2018 ຂອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວໄຫວຂອງຫ້ອງການ.
- ອີງຕາມ ແຈ້ງການ ເລກທີ 285/ທກ, ລົງວັນທີ 14 ພຶດສາພາ 2018 ຂອງຄະນະຈັດຕັ້ງສູນກາງພັກ.

ຫ້ອງການ ອົງການໄອຍະການປະຊາຊົນສູງສຸດ ຂໍຖືເປັນກຽດແຈ້ງການມາຍັງ ຄະນະພັກ-ຄະນະນໍາ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າຝຶກອົບຮົມໄອຍະການ, ອົງການໄອຍະການປະຊາຊົນພາກໃຕ້, ພາກກາງ ແລະ ພາກເໜືອ, ອົງການໄອຍະການປະຊາຊົນ ແຂວງ-ນະຄອນ ໃນຂອບເຂດທົ່ວປະເທດ ຮັບຊາບວ່າ ປະຈຸບັນ ຄະນະຈັດຕັ້ງສູນກາງພັກ ໄດ້ເປີດເວບໄຊ ຜ່ານອິນເຕີເນັດ ນັບແຕ່ວັນທີ 22 ມີນາ 2018 ທີ່ມີລະຫັດຊື່ ເອີ້ນວ່າ: www.pccob.gov.la ເພື່ອທັນກັບໄກການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງ ພັກ-ລັດ, ນິຕິກໍາວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ, ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ, ອົງການຈັດຕັ້ງມະຫາຊົນ ແລະ ການເຄື່ອນໄຫວທ້ອງຖິ່ນ ຜ່ານລະບົບອິນເຕີເນັດດ້ວຍເວບໄຊ website.

ດັ່ງນັ້ນ, ຫ້ອງການ ອົງການໄອຍະການປະຊາຊົນສູງສຸດ ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ ແລະ ຮັບຮູ້ເວບໄຊດັ່ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

ສີສູນທອນ ສ.ຜາບມີໄຊຍ໌